**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 2387/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2011

# ຂໍ້ຕົກລົງ

## ວ່າດ້ວຍການມອບສິດໃຫ້ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ

- ອີງໃສ່ດໍາລັດເລກທີ 228/ນຍ, ລົງວັນທີ 22 ເມສາ 2010 ວ່າດ້ວຍແຫຼ່ງກໍາເນີດສິນຄ້ານໍາເຂົ້າ ແລະ ສົ່ງອອກ;
- ອີງໃສ່ໃບສະເໜີຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ສະບັບເລກທີ 0937/ສຄອ, ລົງວັນທີ 17 ສິງຫາ 2010, ເລກທີ 1383/ສຄອ, ລົງວັນທີ 24 ທັນວາ 2010, ເລກທີ 1511/ສຄອ, ລົງວັນທີ 31 ພຶດສະພາ 2011;
- ອີງໃສ່ ບົດລາຍງານກ່ຽວກັບຜົນຂອງກອງປະຊຸມ ປຶກສາຫາລືກ່ຽວກັບຂັ້ນຕອນການມອບ CO, ງານວາງສະແດງສິນຄ້າໃຫ້ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ສະບັບເລກທີ 1196/ຫອຄ, ລົງວັນທີ 3 ມິຖຸນາ 2011;
- ອີງໃສ່ການຄົ້ນຄວ້າດ້ານວິຊາການຂອງກົມກ່ຽວຂ້ອງ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າອອກຂໍ້ຕົກລົງ:

**ມາດຕາ 1.** ມອບສິດໃຫ້ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວອອກ ແລະ ຄຸ້ມຄອງ ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າເຊັ່ນ: Form AK, Form CO Korea, Form E, Form SPT, Form AANZ ແລະ Form AJ ນັບແຕ່ວັນທີ 1 ກໍລະກົດ 2012 ເປັນຕົ້ນໄປ. ສ່ວນຟອມອື່ນໆນອກຈາກນີ້ແມ່ນ ກະຊວງອຸດສາຫະກໍາ ແລະ ການຄ້າເປັນຜູ້ຮັບຜິດຊອບໃນ ການອອກ ແລະ ຄຸ້ມຄອງຕາມພາລະບົດບາດ ແລະ ລະບຽບການ ຂອງຜູ້ໃຫ້ສິດທິພິເສດດ້ານການຄ້າ ກໍານົດໄວ້.

**ມາດຕາ 2.** ໃຫ້ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈັດຕັ້ງປະຕິບັດການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແຕ່ລະຊະນິດຟອມຕາມທີ່ໄດ້ມອບໝາຍ ໃນມາດຕາ 1 ຂ້າງເທິງນີ້ ຢ່າງເປັນເອກະພາບ ນັບແຕ່ຂັ້ນສູນກາງເຖິງຂັ້ນແຂວງ ແລະ ນະຄອນຫຼວງ.

**ມາດຕາ 3.** ການອອກຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆ ເພື່ອຢັ້ງຢືນການໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າ ທີ່ລະບຸໄວ້ໃນມາດຕາ 7, 8, 9 ແລະ 10 ຂອງດຳລັດເລກທີ 228/ນຍ, ລົງວັນທີ 22 ເມສາ 2010 ແລະ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຂອງແຕ່ລະກອບສັນຍາ ທີ່ກ່ຽວຂ້ອງກັບແຕ່ລະຟອມ.

**ມາດຕາ 4.** ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນເຈົ້າການຮັບຜິດຊອບໃນການຄົ້ນຄວ້າ ອອກລະບຽບການເພື່ອຄຸ້ມຄອງວຽກງານດັ່ງກ່າວ ໃຫ້ຖືກຕ້ອງສອດຄ່ອງກັບນະໂຍບາຍ ແລະ ລະບຽບການຂອງບັນດາປະເທດ ຜູ້ໃຫ້ສິດທິພິເສດດ້ານການຄ້າແຕ່ລະກອບ ພ້ອມທັງຮັບຜິດຊອບໃນການອອກ, ການກວດກາຕິດຕາມການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງ ແລະ ຮັດກຸມ.

**ມາດຕາ 5.** ເພື່ອເປັນເອກະພາບ ໃນການປະຕິບັດຫຼັກການຄຸ້ມຄອງລັດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕ້ອງປະຕິບັດຫຼັກການສະເໝີພາບ, ໂປ່ງໃສ, ເປັນທຳຕໍ່ທຸກໆຫົວໜ່ວຍທຸລະກິດສົ່ງອອກ, ປະຕິບັດໜ້າທີ່ໃນການເກັບຄ່າທຳນຽມ ແລະ ຄ່າບໍລິການຕາມລັດຖະບັນຍັດ ເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ເພື່ອມອບເຂົ້າງົບປະມານຂອງລັດ ພ້ອມທັງສະຫຼຸບລາຍງານໃຫ້ກະຊວງຊາບເປັນແຕ່ລະໄລຍະ (ເດືອນ, ງວດ, ປີ).

**ມາດຕາ 6.** ກ່ອນການມອບໂອນໃຫ້ກົມການນຳເຂົ້າ ແລະ ສົ່ງອອກສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງເພື່ອແຈ້ງ ແລະ ລຸລ່ວງເຫດຜົນ ທີ່ຕ້ອງການມອບໂອນວຽກງານດັ່ງກ່າວ ໃຫ້ສະພາການຄ້າ ແລະ ອຸດສາຫະກຳເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ລະບຸໄວ້ໃນມາດຕາ 1 ພ້ອມທັງກະກຽມຈັດຕັ້ງການຝຶກອົບຮົມ ເພື່ອສ້າງບຸກຄະລາກອນທີ່ຈະຮັບຜິດຊອບ ການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ດັ່ງກ່າວນີ້ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ.

**ມາດຕາ 7.** ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຫ້ອງການສະພາການ

ຄ້າ ແລະ ອຸດສາຫະກຳຂອງແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດການມອບໂອນວຽກງານ ການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕົວຈິງ ໃຫ້ມີຜົນສຳເລັດ ແລະ ທັນກັບເວລາພ້ອມທັງແຈ້ງໃຫ້ບັນດາປະເທດ ແລະ ພາກສ່ວນກ່ຽວຂ້ອງຊາບຢ່າງທົ່ວເຖິງ ກ່ຽວກັບການມອບໂອນດັ່ງກ່າວ.

**ມາດຕາ 8.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ**